ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 10 ຫາ 14 ກຸມພາ 2025




ກອງປະຊຸມປຶກສາຫາລື ກ່ຽວກັບການພັດທະນາ ອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມປຶກສາຫາລື ກ່ຽວກັບການພັດທະນາ ອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ

ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ໃນວັນທີ 28 ມັງກອນ 2025 ນີ້ ທີ່ໂຮງແຮມສຸພັດຕາ ນະຄອນຫຼວງວຽງຈັນ ໄດ້ມີກອງປະຊຸມປຶກສາຫາລື ກ່ຽວກັບການພັດທະນາອຸທິຍານແຫ່ງຊາດ ນາກາຍນ້ຳເທີນຂຶ້ນ ໂດຍໃຫ້ກຽດເປັນປະທານຂອງທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ວັນສີ ກົວມົວ ຮອງ ລັດຖະມົນຕີກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ ແລະ ທ່ານ ສົມສະອາດ ອຸ່ນສີດາ ຮອງເຈົ້າແຂວງໆຄຳມ່ວນ, ເຂົ້າຮ່ວມມີຫົວໜ້າຮອງຫົວໜ້າກົມ ແລະ ຜູ້ຕາງໜ້າຈາກສະພາແຫ່ງຊາດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຕາງໜ້າຈາກແຂວງ ຄຳມ່ວນ, ແຂວງ ບໍລິຄຳໄຊ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາທັງພາຍໃນ ແລະ ຕາງປະເທດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ອຸທິຍານແຫ່ງຊາດນາກາຍນ້ຳເທີນ ໄດ້ຮັບການປະກາດສ້າງຕັ້ງຕາມດຳລັດສະບັບເລກທີ 36/ນຍ, ລົງວັນທີ 15 ກຸມພາ 2019 ມີເນື້ອທີ່ 427,770 ເຮັກຕາ ກວມເອົາ 2 ແຂວງ 4 ເມືອງ ຄື: ເມືອງ ຍົມມະລາດ, ເມືອງ ບົວລະພາ, ເມືອງ ນາກາຍ, ແຂວງ ຄຳມ່ວນ ແລະ ເມືອງ ຄຳເກີດ ແຂວງບໍລິຄຳໄຊ, ຊຶ່ງເປັນເຂດໜຶ່ງທີ່ມີຄວາມອຸດົມສົມບູນທາງດ້ານຊີວະນາໆພັນ, ມີຮ່ອງຮອຍປູລິຍະສະຖານທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳທີ່ໂດດເດັ່ນ ແລະ ມີຄຸນຄ່າດ້ານການອະນຸລັກໃນລະດັບພາກພື້ນ ແລະ ສາກົນ, ໄລຍະຜ່ານມາໄດ້ມີການເຊັນສັນຍາສຳປະທານ ໃນການພັດທະນາໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳເທີນ 2 ລະຫວ່າງ ລັດຖະບານລາວກັບບໍລິສັດເຂື່ອນໄຟຟ້ານ້ຳເທີນ 2 ຈຳກັດ ຈາກຜົນ







ສຳເລັດຂອງການລົງທຶນ ແລະ ພັດທະນາໂຄງການ ເຮັດໃຫ້ໂຄງການເຂື່ອນໄຟຟ້ານ້ຳເທີນ ກາຍເປັນໂຄງການຕົວແບບຂອງໂລກ ເນື່ອງຈາກວ່າການດຳເນີນໂຄງການດັ່ງກ່າວ ໄດ້ອີງໃສ່ຫຼັກການພັດທະນາແບບຍືນຍົງເປັນພື້ນຖານ ແລະ ນຳໃຊ້ມາດຕະການໃນການປົກປ້ອງດ້ານສິ່ງແວດລ້ອມ ແລະ ສັງຄົມຢ່າງເປັນລະບົບ ເຮັດໃຫ້ການພັດທະນາດ້ານອຸດສາຫະກຳພະລັງງານມີປະສິດທິພາບຫຼາຍຂຶ້ນ ຄຽງຄູ່ກັບການປົກປ້ອງຊີວະນາໆພັນອັນໂດດເດັ່ນໃນເຂດອຸທິຍານດັ່ງກ່າວໃຫ້ມີຄວາມຍືນຍົງ ທັງເປັນການປົກປັກຮັກສາພື້ນທີ່ປ່າຍອດນ້ຳທີ່ມີຄວາມສຳຄັນໃນການເກັບກັກ ແລະ ສະໜອງນ້ຳ, ຮັບໃຊ້ການຜະລິດພະລັງງານໄຟຟ້າໄລຍະຍາວ ເນື່ອງຈາກເຫັນໄດ້ຄວາມສຳຄັນລັດຖະບານລາວ ຈຶ່ງໄດ້ມີຄວາມພະຍາຍາມຄຸ້ມຄອງອຸທິຍານແຫ່ງນີ້ໃຫ້ໄປຕາມກົດໝາຍ ແລະ ລະບຽບການທັງສອດຄ່ອງກັບຈຸດປະສົງ ຂອງສັນຍາສຳປະທານ ແລະ ພັນທະອື່ນໆ ໂດຍໃນປັດຈຸບັນໄດ້ມີການສະໜັບສະໜູນດ້ານງົບປະມານໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ພັດທະນາໃນພື້ນທີ່ດັ່ງກ່າວຈາກບໍລິສັດໄຟຟ້ານ້ຳເທີນ 2 ໃນແຕ່ລະປີ ຊຶ່ງຕາມສັນຍາສຳປະທານ (ສະເພາະປີ 2024 ແມ່ນ 1.7 ລ້ານໂດລາສະຫະລັດ), ໄດ້ຮັບການສະໜັບສະໜູນຈາກໂຄງການພູມີທັດ ແລະ ຊີວິດການເປັນຢູ່ໃນລາວ ພາຍໃຕ້ການສະໜັບສະໜູນເງິນກູ້ ແລະ ການຊ່ວຍເຫຼືອລ້າຂອງທະນາຄານໂລກ ແລະ ບັນດາໂຄງການຈຳນວນໜຶ່ງ, ກອງປະຊຸມຄັ້ງນີ້ຈຶ່ງມີຄວາມສຳຄັນ ແລະ ຈຳເປັນເພື່ອປຶກສາຫາລືໃນການສືບຕໍ່ເສີມຂະຫຍາຍ ແລະ ພັດທະນາ ອຸທິຍານແຫ່ງຊາດນາກາຍນ້ຳເທີນ ໃຫ້ມີຄວາມຍືນຍົງຕາມເປົ້າໝາຍຂອງລັດຖະບານເພື່ອກ້າວໄປສູ່ການຂຶ້ນທະບຽນໃນບັນຊີສາກົນຄື: ລາຍຊື່ສີຂຽວ Green list ແລະ

ເຂົ້າໃນບັນຊີມໍຣະດົກໂລກທາງທຳມະຊາດ. ໃນກອງປະຊຸມໄດ້ຮັບຟັງບົດລາຍງານການສະຫຼຸບຕີລາຄາການຄຸ້ມຄອງປ່າສະຫງວນແຫ່ງຊາດໃນໄລຍະຜ່ານມາຈາກກົມປ່າໄມ້, ບົດປະເມີນການກວດກາຕິດຕາມການຈັດຕັ້ງປະຕິບັດໜ້າວຽກຂອງກອງຄຸ້ມຄອງອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ ການຈັດຕັ້ງປະຕິບັດ ແລະ ບັນດາສິ່ງທ້າທາຍບັນຫາທີ່ເກີດຂຶ້ນໃນພື້ນທີ່ເຂດອຸທິຍານແຫ່ງຊາດນາຍນ້ຳເທີນໂດຍຫົວໜ້າກອງຄຸ້ມຄອງອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ ພ້ອມດຽວກັນນີ້ຍັງໄດ້ຮັບຟັງເງື່ອນໄຂ ແລະ ຄວາມເປັນໄດ້ໃນການເຂົ້າໃນບັນຊີມໍຣະດົກໂລກທາງທຳມະຊາດຂອງອຸທິຍານດັ່ງກ່າວ ຈາກກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ, ຈາກນັ້ນບັນດາຜູ້ເຂົ້າຮ່ວມກໍ່ໄດ້ພ້ອມກັນປະກອບຄຳຄິດເຫັນຮ່ວມກັນຢ່າງກົງໄປກົງມາ ແລະ ເປັນເອກະພາບກັນຫຼາຍດ້ານຕໍ່ກັບບັນຫາທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອພັດທະນາອຸທິຍານດັ່ງກ່າວ ໃຫ້ກ້າວໄປສູ່ການເຂົ້າເປັນມໍລະດົກໂລກທາງທຳມະຊາດ ແລະ ບັນຊີສີຂຽວ.




**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;